ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 087 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 26 OCT 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ແລະ ຫ້າງຮ້ານທີ່ຮັບເໝົາຜະລິດເຮືອນຂອງຕູ້ ATM ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຕູ້ເຮືອນແດງເອທີເອັມ ທຄຕລ ຈຳນວນ 50 ຫລັງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຮັບເໝົາຜະລິດເຮືອນຂອງຕູ້ ATM ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍການ ແລະ ສະເປັກ | ຈຳນວນ |
|---|---|---|
| 1. | **ເຮືອນຂອງຕູ້** ATM ຂະໜາດ 265h*150w*260d ທີ່ເຮັດດ້ວຍ: ເຫຼັກ, ເຄືອບສານກັນໜຽງ, ສີສັນຕ່າງໆຕາມເຕັກນິກ ແລະ ຄວາມຕ້ອງການຂອງ ທຄຕລ ໂດຍມີລາຍລະອຽດຄື:<br>- ຜະລິດໂຄງສ້າງພື້ນຕູ້ເຮືອນແດງ ຂະໜາດ 2,60*1,40*0,15 ມ ເຮັດດ້ວຍເຫລັກໜາ 2 ມມ ພັບເຂົ້າມູມ.<br>- ຜະລິດເສົາສູງ 2ມ 4 ດ້ານ ຂະໜາດ 20*20 ຊມ ເຮັດດ້ວຍແຜ່ນເຫລັກໜາ 2ມມ ພັບເຂົ້າມູມ.<br>- ຜະລິດຝາປິດດ້ານຂ້າງ 02 ຂະໜາດ 1.10*2.00ມ ເຮັດດ້ວຍແຜ່ນເຫລັກໜາ 2ມມ ພັບເຂົ້າມູມ.<br>- ຜະລິດ ແລະ ຕິດຕັ້ງປະຕູດ້ານຫລັງ ຫຼື ດ້ານຂ້າງ ຂະໜາດ 1.10*2.00 ມ ເຮັດດ້ວຍແຜ່ນເຫລັກໜາ 2ມມ ພັບເຂົ້າມູມ.<br>- ຜະລິດປະຕູດ້ານໜ້າເຮັດດ້ວຍແຜ່ນເຫລັກໜາ 2ມມ ຂະໜາດ1.10*2.00 ມ ພ້ອມເຈາະປອງ ເຮັດຂອບບັວໜ້າຈໍ່ສີຂາວ ແລະ ປອງຖິ້ມຂີ້ເຫຍື້ອ ພັບເຂົ້າມູມ.<br>- ຜະລິດເພດານດ້ານໜ້າ ຂະໜາດ 1.20*1.50ມ ພ້ອມເຈາະປອງໃສ່ດອກໄຟ LED<br>- ຜະລິດຫລັງຄາ ຂະໜາດ 1.10*2.70ມ ເຮັດດ້ວຍແຜນເຫລັກໜາ 2ມມ ພັບເຂົ້າມູມ.<br>- ຜະລິດແຜ່ນອາລູມີນຽມລາຍຕີນໄກເສີມແຜ່ນເຫຼັກຮັບນ້ຳໜັກ 2ມມ ຂະໜາດ 1.20*1.50ມ<br>- ຜະລິດປ້າຍຫົວດ້ານໜ້າ ຂະໜາດ 0.50*1.50ມ ເຮັດດ້ວຍແຜ່ນເຫລັກໜາ 2ມມ ພັບເຂົ້າມູມ.<br>- ຜະລິດໂຄງປ້າຍຫົວດ້ານຂ້າງ ຂະໜາດ 0.50*2.70ມ ເຮັດດ້ວຍແຜ່ນເຫລັກໜາ 2ມມ ພັບເຂົ້າມູມ.<br>- ພົ່ນສີເກາະເຫຼັກ ແລະ ສີຮອງພື້ນ 01 ຖັງວ ພ້ອມສີພົ່ນລົດຍົນແດງ 3 ຖັງວ.<br>- ແຜ່ນອາຄີລີກ ໜາ 4ມມ ໂປ່ງແສງໃສ່ດ້ານໜ້າ ຂະໜາດ 0.50*1.50ມ.<br>- ແຜ່ນອາຄີລີກ ໜາ 4ມມ ໂປ່ງແສງໃສ່ດ້ານຂ້າງ ຂະໜາດ 0.50*2.70ມ.<br>- ປ້າຍສະຕິກ ATM 24hrs ດ້ານໜ້າຂະໜາດ 0.50*1.50ມ ພິມລະອຽດ<br>- ປ້າຍສະຕິກ ATM 24hrs ດ້ານຂ້າງຂະໜາດ 0.50*1.50ມ ພິມລະອຽດ<br>- ກຸນແຈເປີດ-ປິດ<br>- ສະໜອນກັນຄວາມຮ້ອນ<br>- ກາວກາເສືອ 3 ກິໂລ | 50 ຫຼັງ |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | |
|---|---|---|
| | – ສິລິໂຄນ<br>❖ **ອຸປະກອນລະບົບໄຟຟ້າ:**<br>– ລູກ CB Schneider 1P 20A ຈຳນວນ 02 ລູກ<br>– ລູກ CB Schneider 1P 16A ຈຳນວນ 02 ລູກ<br>– ລູກ CB Schneider 2P 63A ຈຳນວນ 01 ລູກ<br>– ຕູ້ໂຫຼດ Schneider 2P 4ຊ່ອງ ຈຳນວນ 01 ໜ່ວຍ<br>– ກ່ອງລອຍ 4*4 ຈຳນວນ 01 ກ່ອງ<br>– ບອກແຈກ 4*4 ຈຳນວນ 01 ໂຕ<br>– ສາຍ VCT 2*1.5 ຈຳນວນ 30 M<br>– ສາຍ VCT 2*4 ຈຳນວນ 6 M<br>– ສະວິກແສງ ຈຳນວນ 1 ໂຕ<br>– ໜ້າກາກ 6 T ຈຳນວນ 1 ໂຕ<br>– ປັກກາວຄູ່ PANASONIC ແທ້ ຈຳນວນ 02 ລູກ<br>– ສາຍໄຟ THW 1*4 ສີຂຽວ ຈຳນວນ 6 M<br>– ດອກໄຟ LED 1*19W ຈຳນວນ 06 ຊຸດ<br>– ດອກໄຟ LED ມົນ 13W ຈຳນວນ 02 ຊຸດ<br>– TIMER 220V ຈຳນວນ 01 ຊຸດ<br>– ພັດລົມດູດອາກາດ ຮາຕາລິ ຂະໜາດ 25*25 ຊມ ຈຳນວນ 01 ຊຸດ | |

**ເງື່ອນໄຂຂອງບໍລິສັດ ຫ້າງຮ້ານ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **ເອກະສານຊອງທີ 1 (ບໍ່ປິດຊອງ).**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ, (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019).
2. ເອກະສານກ່ຽວກັບມາດຕະຖານເຕັກນິກແມ່ນໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸທີ່ຈະຜະລິດ, ສະຖານທີ່ຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ, ການຮັບປະກັນສິນຄ້າ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກຈະປິດຮັບວັນທີ 06/11/2020 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **ເອກະສານຊອງທີ 2 (ປິດຊອງ).**

1. ໃບສະເໜີລາຄາໃຫ້ລະບຸລາຄາ ແລະ ລວມອາກອນມູນຄ່າເພີ່ມທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນທີ 13/11/2020 ເວລາ 09:30 ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 17/12/2020) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **ໝາຍເຫດ:** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

**ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 90% ຂອງມູນຄ່າພາຍໃນເວລາ 30 ວັນ ຫຼັງຈາກທີ່ໄດ້ຮັບເຄື່ອງຖືກຕ້ອງຄົບຖ້ວນ.

* ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 1 ປີ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ໃ ປະທານຄະນະກຳມະການປະມູນ**

ວຽງສຸກ ຈູນທະວົງ

**ສອບຖາມລາຍລະອຽດເພີ່ມເຕີ່ມ** bidcommittee@bcel.com.la

ຫຼືຕິດຕໍ່ ທ່ານ ພູວອນ ສໍອິນໄຊ: 020 59559889